ສາລະບານ


1. ພາກສະເໜີ....................................................................................3
1.1 ສະພາບຄວາມເປັນມາ....................................................................3
1.2 ປະສົບການໄພນໍ້າຖ້ວມ....................................................................3
1.3 ຈຸດປະສົງ ແລະ ຍຸດທະສາດ....................................................................4
1.3.1 ຈຸດປະສົງ....................................................................................4
1.3.2 ຍຸດທະສາດການຄຸ້ມຄອງໄພພິບັດ.......................................................4
1.4 ສິດ ແລະ ຂອບເຂດ ຂອງແຜນການ.......................................................5
1.4.1 ພາລະໜ້າທີ່ ຂອງ ຄະນະກໍາມະການຂັ້ນເມືອງ.......................................5
1.4.2 ພາລະບົດບາດ ຂອງ ຄະນະກໍາມະການຂັ້ນເມືອງ....................................5
1.4.3 ພາລະບົດບາດ ຂອງ ເຈົ້າເມືອງ.......................................................5
1.5 ວັນເດືອນປີກະກຽມແຜນການ ແລະ ບັນທຶກປັບປຸງແຜນ............................6
1.5.1 ປີກະກຽມແຜນ ແລະ ໝົດອາຍຸແຜນ...................................................6
1.5.2 ການທົບທວນ ແລະ ປັບປຸງແຜນການ...................................................6
2. ສະພາບລວມ ຂອງເມືອງ.......................................................................6
2.1 ທີ່ຕັ້ງ ແລະ ຈຸດພິເສດຂອງເມືອງ..........................................................6
2.2 ແຜນທີ່ຂອງເມືອງ...............................................................................7
2.3 ສະພາບດ້ານການປົກຄອງ....................................................................7
2.4 ວຽກພື້ນຖານໂຄງລ່າງ.........................................................................8
2.4.1 ໂຄງສ້າງດ້ານຄົມມະນາຄົມ................................................................8
2.4.2 ວຽກໂຄງລ່າງດ້ານຊົນລະປະທານ.........................................................9
2.4.3 ໂຄງລ່າງດ້ານວັດທະນະທໍາສັງຄົມ.........................................................9
3. ວິເຄາະຄວາມອາດສາມາດຜູ້ທີ່ຖືກຜົນກະທົບໄດ້ງ່າຍ ແລະ ໄພອັນຕະລາຍ.................9
3.1 ໄພນໍ້າຖ້ວມ.......................................................................................9
3.2 ສາເຫດ ແລະ ລະດູການໄພນໍ້າຖ້ວມ......................................................9
ກ. ສາເຫດຂອງນໍ້າຖ້ວມ..........................................................................9
3.1.2 ປະລິມານຄວາມຮຸນແຮງ ແລະ ເນື້ອທີ່ຖືກນໍ້າຖ້ວມ...................................10
ກ. ຜົນກະທົບທາງດ້ານສັງຄົມ ແລະ ການປົກຄອງ........................................10
ຂ. ຜົນກະທົບທາງດ້ານກະສິກໍາ...............................................................10
ຄ. ຜົນກະທົບທາງດ້ານຊົນລະປະທານ.......................................................10
ງ. ຜົນກະທົບທາງດ້ານການລ້ຽງສັດ..........................................................10
ຈ. ຜົນກະທົບທາງດ້ານພື້ນຖານໂຄງ ຄົມມະນາຄົມ.........................................11
ສ. ຜົນກະທົບດ້ານວັດທະນະທໍາສັງຄົມ......................................................11

3.1.3 ສັງລວມມູນຄ່າເສຍຫາຍຈາກຜົນກະທົບໃນແຕ່ລະຂົງເຂດ....................................11
3.2 ໄພອັນຕະລາຍຈາກໄພແຫ້ງແລ້ງ...................................................................12
3.3 ຂົງເຂດສັງຄົມແລະການປົກຄອງ...................................................................12
3.3.1 ຂົງເຂດທີ່ມີຄວາມສ່ຽງ ຕໍ່ການເກີດໄພພິບັດ........................................................12
ກ. ບ້ານທີ່ມີຄວາມສ່ຽງປະເພດ 1..........................................................................12
ຂ. ບ້ານທີ່ມີຄວາມສ່ຽງປະເພດ 2..........................................................................12
3.3.2 ຂົວເຂດກະສິກຳ...........................................................................................13
3.3.3 ຂົງເຂດພື້ນຖານໂຄງລ່າງຄົມມະນະຄົມ.............................................................13
3.3.4 ຂົງເຂດວັດທະນະທຳສັງຄົມ..........................................................................13
3.4 ຄວາມສາມາດ ແລະ ແຫ່ລງວັດຖຸ...................................................................13
3.4.1 ບັນຊີວັດຖຸອຸປະກອນຮັບໃຊ້...........................................................................14
3.4.2 ບັນຊີພາຫະນະຂົນສົ່ງ....................................................................................14
3.4.3 ບັນຊີອຸປະກອນສື່ສານ..................................................................................14
3.4.4 ບັນຊີອຸປະກອນຄວບຄຸມນ້ຳຖ້ວມ.....................................................................14
3.4.5 ບັນຊີສິ່ງອຳນວຍຄວາມສະດວກທາງການແພດ...................................................15
3.4.6 ບັນຊີຊັບພະຍາກອນມະນຸດ...........................................................................15
4. ກົງຈັກການຈັດຕັ້ງສຳລັບວຽກງານຄຸ້ມຄອງໄພພິບັດ..............................................15
ກ. ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.....................................................15
ຂ. ຄະນະກອງເລຂາ.........................................................................................16
4.2 ພາລະບົດບາດ ຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ..........................16
4.2.1 ພາລະບົດບາດ ຂອງຄະນະກຳມະການຂັ້ນເມືອງ.................................................16
4.2.2 ພາລະບົດບາດລວມ ຂອງຄະນະກອງເລຂາ........................................................17
4.2.3 ພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງບັນດາຂະແໜງການກະສິກຳ.......17
ກ. ຫ້ອງການກະສິກຳ.......................................................................................17
ຂ. ຫ້ອງການທີ່ດິນ ນ້ຳ ແລະ ສິ່ງແວດລ້ອມ............................................................18
ຄ. ຫ້ອງການ ຮສສ...........................................................................................18
ງ. ຫ້ອງການສາທາລະນະສຸກ.............................................................................18
ຈ. ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດ...............................................19
4.3 ບັນດາພົນງານຄຸ້ມຄອງໄພພິບັດ.......................................................................19
ກ. ພົນງານໄພພິບັດຫ້ອງການສາທາ.....................................................................20
ຂ. ພົນງານໄພພິບັດຫ້ອງການ ປ.ກ.ສ...................................................................20
ຄ. ພົນງານໄພພິບັດຫ້ອງການ ປ.ກ.ຊ...................................................................20
4.4.1 ຫ້ອງການຄຸ້ມຄອງໄພພິບັດຢູ່ລະດັບເມືອງ.........................................................20

4.4.2 ບຸກຄະລາກອນຫ້ອງການຄຸ້ມຄອງໄພພິບັດ........................................................20
4.4.3 ບັນຊີສິ່ງຂອງຮັບໃຊ້ສຳລັບຫ້ອງການ(ພາຫະນະອຸປະກອນ)....................................21
5. ມາດຕະການກຽມພ້ອມຕ້ານໄພນ້ຳຖ້ວມ............................................................22
5.1 ການປູກຈິດສຳນຶກໃຫ້ຊຸມຊົນ..................................................................22
5.2 ລະບົບການພະຍາກອນ ແລະ ການເຕືອນໄພລ່ວງໜ້າ............................................22
5.3 ລະບົບການສ້າງແຜນງານກິດຈະກຳຕ່າງໆ...........................................................22
6. ການປະຕິບັດມາດຕະການຕອບໂຕ້...................................................................23
6.1 ການກະກຽມການຕອບໂຕ້.............................................................................23
6.2 ການປະຕິບັດການຕອບໂຕ້ໄພພິບັດ..................................................................23
7. ການປັບປຸງໃຫ້ຄືນສູ່ສະພາບເດີມ.......................................................................23
7.1 ກິດຈະກຳຫລັງການປັບປຸງໃຫ້ຄືນສູ່ສະພາບປົກກະຕິ.............................................23
8. ມາດຕະການຫລຸດຜ່ອນ...................................................................................24
8.1 ການກະກຽມພ້ອມທາງດ້ານບໍ່ແມ່ນໂຄງສ້າງ.......................................................25

ສາທາລະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຄໍາມ່ວນ

ເມືອງມະຫາໄຊ

ຫ້ອງວ່າການປົກຄອງເມືອງມະຫາໄຊ ເລກທີ່............/ຫປມ

(ຄະນະກໍາມະການຄຸ້ມຄອງໄພພິບັດ )

# ແຜນການກຽມພ້ອມ ຕ້ານໄພນໍ້າ

# ຖ້ວມ ສົກປີ 2009-2010 ເມືອງມະຫາໄຊແຂວງ ຄໍາມ່ວນ

- ອີງຕາມ: ແຜນພັດທະນາເສດ ຖະກິດ ສັງຄົມ 5 ປີ ຂອງເມືອງ ມະຫາໄຊ 2005-2010
- ອີງຕາມ: ຂໍ້ຕົກລົງແຕ່ງຕັ້ງ ຂອງເຈົ້າເມືອງ ທມະຫາໄຊ ສະບັບເລກ ທີ່ 037/ ລົງວັນທີ່ 5/2/09

## I./ ພາກສະເໜີ

## 1.1/ ສະພາບຄວາມເປັນມາ

ຍ້ອນທີ່ຕັ້ງພູມສັນຖານຂອງເມືອງມະຫາໄຊ ມີ ສາຍນໍ້າເຊບັ້ງໄຟ ເປັນສາຍນໍ້າໃຫຍ່ ໄຫຼຜ່ານໃຈກາງ ຂອງເມືອງ ພ້ອມທັງມີຫ້ວຍ, ໜອງຄອງບຶງເປັນຈໍານວນຫຼາຍເມືອງມະຫາໄຊ ຈຶ່ງ ເປັນເມືອງໜຶ່ງທີ່ມີຄວາມສ່ຽງສູງຕໍ່ການເກີດໄພນໍ້າຖ້ວມສູງໂດຍສະເພາະ ແມ່ນ ບ້ານທີ່ຢູ່ລຽບ ຕາມແຄມແມ່ນໍ້າ ແມ່ນ ໄດ້ ຮັບຜົນກະທົບຈາກນໍ້າຖ້ວມເກືອບທຸກໆ ປີ ມັນໄດ້ສ້າງຜົນເສຍຫາຍທາງດ້ານຊີວິດ, ສັບສິນ ແລະ ສັດ ສາວາສິງ ຢ່າງໜັກໜ່ວງ .

## 1.2 ປະສົບການໄພນໍ້າຖ້ວມ ໃນໄລຍະຜ່ານ

ໃນຮອບ10 ປີ ຜ່ານມາ (1996-2005) ຜົນກະທົບຈາກໄພນໍ້າຖ້ວມໄດ້ ເຮັດໃຫ້ ຄະນະພັກ ອໍານາດການປົກຄອງແຕ່ລະຂັ້ນ(ເມືອງ-ບ້ານ)ຕະຫຼອດຮອດປະຊາຊົນໃນເຂດທີ່ຖືກຜົນກະທົບໄດ້ຮັບບົດຮຽນແລະປະສົບການຫຼາຍດ້ານເຊັ່ນ ການກະກຽມຕອບໂຕ້ໄພນໍ້າຖ້ວມ ການປຸກລະດົມຂົນຂວາຍ ພາກສ່ວນຕ່າງໆມີສ່ວນຮ່ວມໃນການເຄື່ອນໄຫວປະຕິບັດກິດຈະກໍາ ປ້ອງກັນ ຕ້ານແລະທົດແທນ ຜົນກະທົບຈາກໄພນໍ້າຖ້ວມ ເຊິ່ງໃນນັ້ນ ສິ່ງສໍາຄັນ ຄະນະກໍາມະການຂັ້ນເມືອງໄດ້ເອົາໃຈໃສ່ເປັນພິ ເສດ ຕໍ່ການຈັດຕັ້ງປະຕິບັດ ພາລະບົດບາດໜ້າທີ່ຮັບຜິດຊອບຂອງຕົນ ເຊິ່ງສະແດງອອກ ໃນປີ 2005 ເປັນປີທີ່ນໍ້າຖ້ວມຮ້າຍແຮງໃນ ຮອບຊາວ ກ່ວາປີ ຜົນກະທົບແຕ່ລະດ້ານຈາກໄພນໍ້າຖ້ວມໃນຮອບ10 ປີຜ່ານມາ(1996-2005)ພໍສັງລວມໂດຍສັງເຂດດັ່ງຕາຕະລາງ ຕໍ່ໄປນີ້ .

ຕາຕະລາງ ຈໍານວນບ້ານ ທີ່ຖືກນໍ້າຖ້ວມ ແຕ່ປີ 1999-2008

| ປີ 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|
| ບ້ານ | 43 | 34 | 39 | - | 42 | 48 | - | 35 | 34 |

## 1.3 ຈຸດປະສົງ ແລະຍຸດທະສາດ

### 1.3.1 ຈຸດປະສົງ

- ເພື່ອ ເປັນການເຊື່ອມຕໍ່ແຜນຍຸດທະສາດ ໃນການຄຸ້ມຄອງໄພພິບັດ ຂັ້ນແຂວງ ແລະ ເມືອງ
- ເພື່ອເປັນການກະກຽມຄວາມພ້ອມໃນການປ້ອງກັນ ,ສະກັດກັ້ນ ,ຕອບໂຕ້ແລະຟື້ນຟູ ທົດແທນ ຜົນກະທົບຈາກໄພພິບັດ ເຊິ່ງອາດຈະເກີດ ຂື້ນໄດ້ ໃນທຸກໆ ປີ
- ເພື່ອເປັນບ່ອນອີງໃນການເຄື່ອນໄຫວຕິດ ຕາມ ຊຸກຍູ້ ສະຫຼູບດີລາຄາປະເມີນຜົນ ຂອງການ ຈັດຕັ້ງປະຕິບັດ ແຜນງານ ກິດ ຈະກຳ ຕ່າງໆ ສຳລັບປ້ອງກັນ ສະກັດກັ້ນຕອບໂຕ ແລະ ຟື້ນຟູ ທົດແທນຄືນ ຜົນກະທົບ ຈາກໄພພິບັດ ດັ່ງກ່າວ.
- ເປັນການເອື້ອຍອຳນວຍ ຄວາມສະດວກ ໃຫ້ ແກ່ ຄະນະກຳມະການ ຄຸ້ມຄອງໄພພິບັດ ຂັ້ນເມືອງ ແລະແຂວງພ້ອມ ກັບການນຳຂັ້ນເມືອງ,ແຂວງ ໃນການຊີ້ນຳໆພາການເຄື່ອນ ໄຫວ ຈັດຕັ້ງປະຕິບັດ ໜ້າທີ່ຂອງບັນດາທີມງານ ແລະ ກຳມະການຢູ່ພາກສະໜາມ ໃນແຕ່ລະໄລຍະ ຂອງແຕ່ລະທ້ອງຖິ່ນ ຢ່າງໃກ້ສິດ ແລະ ແທດເໝາະກັບສະພາບຄວາມເປັນຈິງ
- ເປັນເຄື່ອງມືອັນສຳຄັນໃຫ້ແກ່ທີມງານຕ່າງໆທີ່ເຮັດວຽກໃນພາກສະໜາມໄດ້ມີຄວາມຄ່ອງ ແຄວແລະວອງໄວທ່ວງທັນກັບສະພາບເວລາແລະສະພາບການ ພ້ອມທັງເປັນການສ້າງລະບົບ ແລະ ແບບແຜນວິທີເຮັດວຽກ ທີ່ມີຢ່າງມີຄວາມ ເອກະພາບ ແລະມີປະສິດ ທີຜົນສູງ

### 1.3.2 ຍຸດທະສາດ ການຄຸ້ມຄອງໄພພິບັດ

- ກຳນົດຂົງເຂດ ແລະ ພື້ນທີ່, ທີ່ມີຄວາມສ່ຽງສູງ ອັນ ເປັນຈຸດຫຼໍ່ແຫຼມ ຂອງການເກີດ ໄພພິບັດ ນ້ຳຖ້ວມໄປຄຽງຄູ່ກັບການສ້າງແຜນງານໂຄງການແລະກິດຈະກຳສຳລັບການກະກຽມປ້ອງກັນ ສະກັດກັ້ນ,ຕອບໂຕ ,ຟື້ນຟູທົດແທນ ,ຜົນສາຍທາຍຈາກ ຜົນກະທົບ ຈາກ ໄພພິບັດ ດັ່ງກ່າວ ພ້ອມກັນສົ່ງເສີມຈາກການ ປົກປັກຮັກສາສິ່ງແວດລ້ອມ ແຫຼ່ງສັບພະຍາກອນຂອງທ້ອງຖິ່ນ ໃຫ້ ໝັ້ນຄົງຕະຫຼອດໄປ
- ສຸມທຸກກຳລັງແຮງ ແລະ ໝູນໃຊ້ ຢ່າງປະດິດ ສ້າງ ຂອງທ່າ ແຮງບົ່ມຊ້ອນ ພາຍໃນເມືອງ ແລະທ້ອງຖິ່ນຮາກຖານໄປພ້ອມກັບຍາດແຍ່ງເອົາທຸກໆກາລະໂອກາດເພື່ອປະກອບສ່ວນເຂົ້າໃນ ຂະບວນການເຄື່ອນໄຫວທີ່ມີປະສິດທິພາບບົນພື້ນຖານ ການປະຕິບັດ ລະບົບບໍລິຫານ ຄຸ້ມຄອງອັນມີ ວິທະຍາສາດ
- ໄປຄຽງຄູ່ກັບການນຳໃຊ້ ທ່າແຮງ ບົ່ມຊ້ອນ ບັນດາ ແຫຼ່ງ ສັບພະຍາກອນ ທີ່ມີໃນ ທ້ອງຖິ່ນ ຕ້ອງໄດ້ ມີການຍາດ ແຍ່ງ ສະບັບສະໜູນ ຊ່ວຍເຫຼືອ ທາງດ້ານແຫຼ່ງທຶນ ແລະວັດຖຸອຸປະກອນ ຈາກພາກສ່ວນຕ່າງໆຂອງສັງຄົມເຊັ່ນ:ອົງການຈັດຕັ້ງສາກົນນັກທຸລະກິດຮ້າງຮ້ານແມ່ຄ້າຊາວຂາ ຍ ອື່ນໆໂດຍສະເພາະແມ່ນໂຄງການ ADPC ຂອງໂຄງການ MRC ດັ່ງນີ້ ເປັນຕົ້ນ.
- ຖືເອົາການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບ ຈາກໄພພິບັດ ເປັນບັນຫາ ຕົ້ນຕໍ ເອົາການ ຕອບໂຕແລະຟື້ນຟູ ທົດແທນ ເປັນບັນຫາສຳຄັນ ແນໃສ່ ເພື່ອ ຫຼຸດຜ່ອນການສູນເສຍ ຊີວິດ ແລະ ສັບສິນຂອງລັດ ແລະ ປະຊາຊົນ ທີ່ເກີດ ຈາກໄພພິບັດ ດັ່ງກ່າວ .
- ຍາດແຍ່ງຂໍການສະໜັບສະໜູນສຳລັບການກໍ່ສ້າງພື້ນຖານໂຄງລ້າງທີ່ເປັນຍຸດທະສາດສຳລັບ

ການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບຈາກ ໄພພິບັດ ເຊັ່ນ: ການສ້າງທົ່ນທາງ ຄູ ກັ້ນນ້ຳ ລຽບຕາມແຄມນ້ຳເຊ,ນ້ຳອຸລາຍົກລະດັບຄວາມສາມາດທີ່ປ່ຽນລົ້ນໄປດ້ວຍປະສິດ ທິພາບສູງ ຂອງລະບົບຊົນລະປະທານແລະການຄຸ້ມຄອງລະບາຍນ້ຳອອກຈາກຂອບເຂດທີ່ມີນ້ຳ ຖ້ວມຂັງ ລົງສູ່ແມ່ນ້ຳໃຫຍ່ ແລະ ອື່ນໆທີ່ເໝາະສົມ .

## 1.4 ສິດ ແລະ ຂອບເຂດ ຂອງແຜນການ

### 1.4.1 ພາລະໜ້າທີ່ຂອງຄະນະກຳມະການຂັ້ນເມືອງ

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ແມ່ນ ຖືກແຕ່ງຕັ້ງ ໂດຍທ່ານເຈົ້າເມືອງ ເຊິ່ງແມ່ນທ່ານ ຮອງເຈົ້າ ເມືອງ ເປັນປະທານ ແລະ ປະກອບດ້ວຍ ທ່ານ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງ ຮ່ວມ ເປັນກຳມະການ.

- ຄະນະກຳມະການຂັ້ນເມືອງ ມີ ຄະນະກອງເລຂາ ເຊິ່ງແມ່ນ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງເປັນຫົວໜ້າ ແລະ ເຮັດໜ້າທີ່ເປັນ ເລຂາ ໃຫ້ ແກ້ ຄະນະກຳມະການດັ່ງກ່ວາ
- ຄະນະກຳມະການມີໜ້າທີ່ພາລະບົດບາດກຳນົດແນວທາງແລະຍຸດທະວິທີໃນການສ້າງໂຄງການດຳເນີນງານແຜນງານໂຄງການ ກິດ ຈະການຕ່າງ ໆ ເພື່ອ ກະກຽມ ຄວາມພ້ອມ ສຳລັບການປ້ອງກັນ ສະກັດ ກັ້ນຕອບໂຕ ແລະ ຟື້ນພູທົດແທນ ຜົນ ກະທົບຈາກ ໄພພິບັດ ແນໃສ່ ເພື່ອຫຼຸດຜ່ອນການສູນເສຍ ຊີວິດ ແລະ ສັບສິນ ຂອງລັດ ແລະ ປະຊາຊົນບັນດາເຜົ່າ
- ຕິດຕາມກວດກາແລະເກັບກຳສະພາບການຕ່າງໆທີ່ເກີດຂື້ນໃນເວລາເຄື່ອນໄຫວຈັດຕັ້ງປະຕິບັດແຜນງານໂຄງການໃນແຕ່ລະໄລຍະເຊັ່ນກ່ອນເກີດໄພພິບັດໄລຍະເກີດໄພພິບັດແລະໄລຍະຫຼັງຈາກເກີດ ໄພພິບັດ.
- ເຄື່ອນໄຫວຈັດຕັ້ງປະຕິບັດແຜນງານໂຄງການແລະກິດຈະກຳຕ່າງໆໃນແຕ່ລະໄລຍະຈັດຕັ້ງກອງປະຊຸມສະຫຼຸບສັງລວມຜົນການເຄື່ອນໄຫວແລະກຳນົດແຜນການແຕ່ລະໄລຍະພ້ອມທັງລາຍງານການເຄື່ອນໄຫວໃຫ້ແກ່ທ່ານເຈົ້າເມືອງແລະຄະນະກຳມະການຂັ້ນແຂວງຢ່າງເປັນປົກກະຕິ

ນອກນັ້ນຫາກເກີດກໍລະນີອັນຈຳເປັນຮີບດ່ວນຄະນະກຳມະການສາມາດ ຈັດກອງປະຊຸມວິສາມັນ ຂື້ນເພື່ອ ຕົກລົງແກ່ໄຂ ບັນຫາ ໃຫ້ ທວງ ທັນກັບສະພາບການ .

### 1.4.2 ພາລະບົດບາດ ຂອງຄະນະກຳມະການ ຂັ້ນເມືອງ

ສຳລັບຄະນະກຳມະການ ແມ່ນ ມີພາລະບົດບາດແລະຄວາມຮັບຜິດຊອບເປັນເສນາທິການໃຫ້ແກ່ຄະນະປະທານ ເຊັ່ນ: ການເກັບກຳຂໍ້ມູນ,ການສັງລວມຂໍ້ມູນ ວິໃຈຂໍ້ມູນຮ່າງແຜນງານໂຄງການເຄື່ອນໄຫວແລະບັນດານິຕິກຳຕ່າງໆໃຫ້ແກ່ຄະນະກຳມະການຕິດຕາມເຝົ້າລະວັງຮັບການລາຍງນຈາກບັນດາທີມງານທີ່ກ່ຽວຂ້ອງເພື່ອເຄື່ອນໄຫວຕິດຕາມປະສານງານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງນັບທັງຂັ້ນເມືອງແລະຂັ້ນແຂວງກະກຽມບັນດາປັດໃຈທີ່ຈຳເປັນສຳລັບການເຄື່ອນໄຫວ ຕ່າງໆຂອງຄະນະກຳມະການ ແລະ ທີມງານກະກຽມຄວາມພ້ອມສຳລັບການຈັດກອງປະຊຸມສະຫຼູບຖອດຖອນບົດຮຽນຂອງຄະນະກຳມະການໃນແຕ່ລະໄລຍະ

### 1.4.3 ພາລະບົດບາດ ຂອງເຈົ້າເມືອງ

ເຈົ້າເມືອງແມ່ນ ຜູ້ ນຳສູງສຸດພາຍໃນເມືອງແລະ ມີ ສິດ ອານຸມັດ ສັ່ງການ.ອອກຂໍ້ ກຳນົດ ລະບຽບ

ຕ່າງໆທີ່ພົວພັນເຖິງການ ເຄື່ອນໄຫວ ຂອງຄະນະກຳມະການ ສຳລັບການປ້ອງກັນ ສະກັດກັ້ນ ຕອບໂຕ້ ແລະ ຟື້ນຟູທົດແທນ ຜົນກະທົບຈາກໄພພິບັດ ເຊິ່ງອາດ ສາມາດເກີດ ຂື້ນໄດ້ ໃນ ທຸກປີ

## 1.5 ວັນເດືອນປີ ກະກຽມ ແຜນການ ແລະ ບັນທຶກປັບປຸງແຜນການ

### 1.5.1 / ປີກະກຽມແຜນການ ແລະ ໝົດອາຍຸ ແຜນ

- ກະກຽມແຜນການເດືອນ 3/09 (ເດືອນມີນາ)
- ອາຍຸຂອງແຜນການ ທັນວາ 2010.

### 1.5.2/ ການທົບທວນ ແລະປັບປຸງແຜນການ

- ທົບທວນແຜນ ຫຼັງຈາກ ນ້ຳຖ້ວມແລະ ວາງແຜນ ເພື່ອກຳນົດມາດຕະການ ປ້ອງກັນໄພນ້ຳຖ້ວມ
- ປັບປຸງແຜນການ ເດືອນ 7-8/09 (ກໍລະກົດ,ສິງຫາ)

## 2./ ສະພາບລວມ ຂອງເມືອງ

### 2.1 ທີ່ຕັ້ງ ແລະ ຈຸດພິເສດ ຂອງເມືອງ

ເມືອງມະຫາໄຊ ແມ່ນ ໜຶ່ງໃນ 9 ຕົວເມືອງ ທີ່ຂື້ນກັບ ແຂວງ ຄຳມ່ວນ ເຊິ່ງມີ ໄລຍະຫ່າງ ໄປທາງທິດ ຕາ ເວັນ ອອກ ຂອງຫ້ອງວ່າ ການ ປົກຄອງ ແຂວງ ຄຳມ່ວນ ປະມານ 40 ກິໂລ ແມັດ ມີ ຊາຍແດນຕິດ ຈອດ ກັບ5 ຕົວເມືອງ ຄື:

- ທິດ ເໜືອຕິດ ກັບເມືອງ ຍົມມະລາດ
- ທິດ ໃຕ້ ຕິດ ກັບເມືອງ ໄຊບົວທອງ ແລະ ເຊບັ້ງໄຟ
- ທິດ ຕາເວັນອອກ ຕິດ ກັບເມືອງບົວລະພາ
- ທິດຕາເວັນຕົກຕິດ ກັບເມືອງທ່າແຂກ

ເຊິ່ງມີເນື້ອທີ່ທັງໝົດ 1.409 ກມ2 ໃນນັ້ນມີເນື້ອທີ່ພູຫີນປູນ ກວມເອົາ 22.904,53 ເຮັດຕາ ເທົ່າກັບ 16,26% , ເນື້ອທີ່ ທາງ 14,694,300 ເຮັດຕາ ເທົ່າກັບ 10,43 % ເນື້ອທີ່ປຸກສ້າງ 2.687,22 ເຮັດຕາ ເທົ່າກັບ 1,90 % , ເນື້ອທີ່ນາ 8.901,69 ເຮັດຕາ ເທົ່າກັບ 6,32% , ເນື້ອທີ່ດິນປຸກພືດ ສວນ -ລ້ຽງສັດ 893,52 ເຮັດຕາ ເທົ່າກັບ 0,63%,ເນື້ອທີ່ປ່າໂຄກ21,449 ເຮັດຕາ ເທົ່າກັບ 15,22% ເນື້ອທີ່ປ່າເລົ່າ ສາມາດທຳການຜະລິດ ໄດ້ 4.000,53 ເຮັດ ຕາ ເທົ່າກັບ 2,83% ເນື້ອທີ່ປ່າ ດົງດິບ 42.896 ເຮັດ ຕາ ເທົ່າກັບ 30,46% ເນື້ອທີ່ປ່າສະຫງວນ ຂອງເມືອງແລະປ່າສະຫງວນພູຫີນປູນ3.682.,77ເຮັດຕາເທົ່າກັບ 2.62% ,ເນື້ອທີ່ໜອງ,ແມ່ນ້ຳລຳເຊ,ມີ18.790,44ເຮັດຕາເທົ່າກັບ13,33% ,ເມືອງມະຫາໄຊມີ 70 ບ້ານ,ມີ 6.170 ຄອບຄົວ, ມີພົນລະເມືອງທັງໝົດ 32.982 ຄົນ, ຍິງ 16.688 ຄົນ, ສະເລັ່ຍຄວາໜາແໜ້ນ 23 ຄົນ ຕໍ່ກິໂລຕາແມັດ,ເປັນເມືອງທີ່ມີອຸນນະພູມອົບອຸ່ນຂ້ອນຂ້າງຮ້ອນມີ 2 ລະດູຄືລະດູຮ້ອນແລະ ລະດູຝົນປະລິມານນ້ຳຝົນສະເລຍໃນປີນ້ຳຖ້ວມປະມານ13,4ມິນລີແມັດ, ມີນ້ຳຖ້ວມປານກາງມີ 10,6ມີລີແມັດ.

ບັນດາເນື້ອທີ່ດິນທີ່ຖືກນຳໃຊ້ສ່ວນຫລວງຫລາຍແມ່ນການຜະລິດ ກະສິກຳ ແລະລ້ຽງສັດ,

- ເຊິ່ງການປູກຝັງສ່ວນໃຫຍ່ແມ່ນການປູກເຂົ້ານາປີແລະນາແຊງນອກນັ້ນແມ່ນການປູກພືດຜັກທັນຍາຫານຕ່າງໆອັນພົ້ນເດັ່ນແມ່ນຂະບວນການປູກສາລີແລະພືດຜັກອື່ນໆ

- ສ່ວນຮູບແບບຂອງການຄຸ້ມຄອງການນຳໃຊ້ທີ່ດິນສ່ວນຫລວງຫລາຍແມ່ນການຂື້ນທະບຽນທີ່ດິນແລະການນຳໃຊ້ໃບແຈ້ງທີ່ດິນເຊີ່ງກວມລວມເອົາເຖີງ 95 %

+ ດ້ານການດຳລົງຊີວິດ ຂອງປະຊາຊົນ ສ່ວນໃຫຍ່ແມ່ນ ເຮັດ ນາເປັນຕົ້ນຕໍ ກວມເອົາ 97% ອາຊີບຄ້າຂາຍ ແລະ ກຳມະກອນ ເປັນສຳຮອງ .

ດ້ານຖານະຄອບຄົວມີຄອບຄົວຂາດກີນ 420 ຄອບຄົວ, ຄອບຄົວກຸ້ມກີນ 4.243 ຄອບຄົວ ,ຄອບຄົວເຫຼືອກີນ497ຄອບຄົວປະກອບດ້ວຍ 2 ຊົນເຜົ່າ ຄື ເຜົ່າ ລາວລຸ້ມກວມ ເອົາ 71,3%, ເຜົ່າລາວເທີງ ກວມເອົາ 28,70% ຖືສາດສະໜາພຸດ100% ມີແຮງງານຕົ້ນຕໍ 18.568 ຄົນ,ສຳຮອງ 14.414 ຄົນ.ມີໄຟຟ້າໃຊ້ 53 ບ້ານມີສາຍນ້ຳເຊບັ້ງໄຟເປັນສາຍນ້ຳຫຼັກສ່ວນສາຂານ້ຳນ້ອຍຄື ສາຍນ້ຳອຸລາ ,ສາຍນ້ຳ ປຸງດ , ສາຍນ້ຳໄກສອນ, ສາຍນ້ຳປົງ, ສາຍນ້ຳພິດ ,ສາຍນ້ຳ ຊຽງເຊັດ ທີ່ເປັນສາຂານ້ອຍ.

## 2.2 <u>ແຜນທີ່ຂອງເມືອງ.</u>




2.3/ ສະພາບດ້ານການປົກຄອງ

ເມືອງມະຫາໄຊມີ 70 ບ້ານ,ແບ່ງອອກ ເປັນ 14 ກຸ່ມບ້ານ, ມີ 6.170 ຄອບຄົວ, ມີພົນລະເມືອງທັງໝົດ 32.982 ຄົນ, ຍິງ 16.688 ຄົນ,ລາຍລະອຽດດັ່ງຕາຕະລາງດັ່ງລຸ່ມນີ້:

+ ຕາຕະລາງສັງລວມ, ສະຖິຕິຈຳນວນພົນລະເມືອງ

| ລ/ດ | ຊື່ກຸ່ມບ້ານ | ຈຳນວນບ້ານ | ຄອບຄົວ | ຈຳນວນພົນລະເມືອງ | |
|---|---|---|---|---|---|
| | | | | ລວມ | ຍິງ |
| 1 | ກຸ່ມກະວະ | 7 | 368 | 1.929 | 992 |

| | | | | | |
|---|---|---|---|---|---|
| 2 | ກຸ້ມປ່າໝາມ | 6 | 652 | 3.084 | 1.601 |
| 3 | ກຸ່ມໂພນນາດີ | 6 | 314 | 1.717 | 885 |
| 4 | ກຸ່ມ ໂພນເມືອງ | 5 | 663 | 3.701 | 1.902 |
| 5 | ກຸ່ມນາຜາແກ້ວ | 3 | 187 | 1.108 | 562 |
| 6 | ກຸ່ມ ບ້ານໃໝ່ | 11 | 693 | 3.378 | 1.725 |
| 7 | ກຸ່ມຄຳເພືອງ | 3 | 180 | 952 | 502 |
| 8 | ກຸ່ມ ນາແສ | 2 | 177 | 1.048 | 523 |
| 9 | ກຸ່ມສ້າງພອກ | 3 | 252 | 1.431 | 735 |
| 10 | ກຸ່ມມະຫາໄຊ | 3 | 559 | 2.434 | 1.224 |
| 11 | ກຸ່ມຫຼັກ9 | 4 | 270 | 1.480 | 724 |
| 12 | ກຸ່ມບ້ານດ້າງ | 3 | 312 | 1.683 | 874 |
| 13 | ກຸ່ມນາດູ່ | 8 | 529 | 2.735 | 1.385 |
| 14 | ກຸ່ມນາຫານ | 4 | 300 | 1724 | 872 |
| | ລວມ | 68 | 5.256 | 28.404 | 14.510 |
| ບ້ານໃຫຍ່ຂຶ້ນກັບເມືອງ | | | | | |
| 1 | ບ້ານ ໂພວາ | 1 | 195 | 1.002 | 514 |
| 2 | ບ້ານ ໂພນສະອາດ | 1 | 335 | 1.532 | 735 |
| | ລວມ | 2 | 486 | 2.534 | 1.249 |
| | ລວມຍອດ | 70 | 6.170 | 32.982 | 16.688 |

2.4/ ວຽກພື້ນຖານໂຄງລ່າງ

2.4.1/ ໂຄງສ້າງທາງດ້ານຄົມມະນາຄົມ

-ເມືອງມະຫາໄຊເປັນເມືອງໜຶ່ງທີ່ລະບົບເສັ້ນທາງໄປມາຫາສູ່ກັນແຕ່ລະບ້ານມີຄວາມຫຍຸ້ງຍາກໃນລະດູຝົນທົ່ວເມືອງມີ ເສັ້ນທາງທັງໝົດ 32 ເສັ້ນ ມີຄວາມຍາວທັງໝົດ 436.36 ກິໂລແມັດ , ທາງທີ່ສາມາດຫຼວໄດ້ 2 ລະດູ 31 ເສັ້ນ ມີຄວາມຍາວ 436,63 ກິໂລແມັດ ເຊິ່ງລາຍລະອຽດມີຕາຕະລາງສະແດງດັ່ງລຸ່ມນີ້:

| ລ/ດ | ຊື່ເສັ້ນທາງ | ຈຳນວນເສັ້ນ | ຄວາມຍາວ | ໝາຍເຫດ |
|---|---|---|---|---|
| 1 | ທາງແຂວງ ຄຸ້ມຄອງ | 1 | 23Km | |
| 2 | ທາງຂອງເມືອງຄຸ້ມຄອງ | 2 | 118Km | |
| 3 | ທາງເທດສະບານເມືອງ | 1 | 9,63Km | |
| 4 | ທາງດິນແດງ (ດິນໂລ) | 11 | 126Km | |
| 5 | ທາງຊຸມຊົນ (ປະຊາຊົນເຮັດ) | 17 | 160Km | |
| | ລວມ | 32 | 436,63 | |

ນອກຈາກເສັ້ນທາງແລ້ວກໍມີຂົວອີກຈຳນວນ 88 ແຫ່ງຄື:

1/ ຂົວເບຕົງ 7 ແຫ່ງຍາວ 336 ແມັດ

2./ ຂົວເຫຼັກ 9 ແຫ່ງຍາວ 227 ແມັດ.

3./ ຂົວໄມ້ຊຸມຊົນ 75 ແຫ່ງ ຍາວ 1.393 ແມັດ.

2.4.2/ ວຽກໂຄງສ້າງດ້ານຊົນລະປະທານ

- ເມືອງມະຫາໄຊເປັນເມືອງໜຶ່ງທີ່ມີຊົນລະປະທານສຳລັບແກ້ໄຂບັນຫານ້ຳຖ້ວມນາໃນລ່ອງແຄມຝັ່ງນ້ຳເຊບັ້ງໄຟໃນທົ່ວເມືອງມີຊົນລະປະທານ.24.ໂຄງການ,ໃນນັ້ນ; ຝາຍນ້ຳລົ້ນ 4 ແຫ່ງ , ,ໂຄງການຈັກສູບນ້ຳ 20 ແຫ່ງ ສາມາດທົດເນື້ອທີ່ນາໄດ້ທັງໝົດໄດ້300 ຮຕ ,

2.4.3 / ໂຄງສ້າງດ້ານວັດທະນະທຳ -ສັງຄົມ

- ພາຍໃນເມືອງມະຫາໄຊມີ ຫຼາຍສິ່ງ ສາທາລະນະ ປະໂຫຍດ ເຊິ່ງໄດ້ແຈກຢາຍຕາມແຕ່ລະຂະແໜງການ ພໍສະຫຼູບໄດ້ ດັ່ງຕາຕະລາງດັ່ງລຸ່ມນີ້

ຕາຕະລາງພື້ນຖານໂຄງສ້າງ ທາງວັດທະນະທຳ-ສັງຄົມ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ອານຸບານ | ແຫ່ງ | 12 | |
| 2 | ໂຮງຮຽນປະຖົມ | ແຫ່ງ | 69 | |
| 3 | ໂຮງຮຽນມັດທະຍົມຕອຕົ້ນ | ແຫ່ງ | 9 | |
| 4 | ໂຮງຮຽນມັດທະຍົມຕອນປາຍ | ແຫ່ງ | 3 | |
| 5 | ວັດແລະ ໂບດ | ແຫ່ງ | 40 | |
| 6 | ໂຮງໝໍເມືອງ | ແຫ່ງ | 1 | |
| 7 | ສຸກສາລາ(ໂຮງໝໍກຸ່ມບ້ານ) | ແຫ່ງ | 7 | |
| 8 | ຫ້ອງກວດພະຍາດເອກະຊົນ | ແຫ່ງ | 13 | ຮ້ານຂາຍຢາ |
| 9 | ຈຳນວນບໍ່ບາດານ | ບໍ່ | 65 | |
| 10 | ຈຳນວນນ້ຳສ້າງແຄງຊີມັງ | ແຫ່ງ | 57 | |
| 11 | ໂຮງງານນ້ຳດື່ມບໍລິສຸດ | ແຫ່ງ | 2 | |
| 12 | ໂຮງງານນ້ຳກ້ອນ | ແຫ່ງ | 7 | |
| ລວມ | | 12 | 285 | |

3/ ການວິເຄາະຄວາມອາດສາມາດ ຜູ້ທີ່ຖືກຜົນກະທົບໄດ້ງ່າຍ ແລະ ໄພອັນຕະລາຍ

3.1/ ໄພນ້ຳຖ້ວມ

3.1.1/ ສາຍເຫດແລະລະດູການ ໄລຍະນ້ຳຖ້ວມ

ກ.) <u>ສາຍເຫດຂອງນ້ຳຖ້ວມ</u>

-ໄພນ້ຳຖ້ວມທີ່ເກີດຂື້ນພາຍໃນເມືອງມະຫາໄຊ ສ່ວນຫຼາຍກວມເອົາເນື້ອທີ່85%ແມ່ນມາຈາກນ້ຳລົ້ນຕາຝັ່ງຂອງນ້ຳເຊບັ້ງໄພເຊິ່ງເກີດຈາກການໄຫຼທ້ອນໂຮມມາຈາກສາຂາຕ່າງໆເຊິ່ງ ມີຈຸດຫຼໍ່ແຫຼມຢູ່ຫຼາຍຈຸດຄື: ຈຸດບ້ານສົມສະນຸກ,ບ້ານດ້າງ,ບ້ານແກ້ງສະທ່ວາງ,ບ້ານນາກຽວ,ບ້ານຄຳເຟືອງ, ບ້ານປົ່ງ,ບ້ານຜານາງ,ບ້ານມະຫາໄຊ,ບ້ານໂພວາ,ບ້ານນາທານບ້ານອີລານ,ບ້ານໜອງກອກ,ບ້ານເວີນ,ບ້ານນາຄ້າຍ,ບ້ານນາຣີ.

ຂ/ ລະດູການໄລຍະນ້ຳຖ້ວມ

- ລະດູການນ້ຳຖວ້ວມສ່ວນຫຼາຍຢູ່ລະຫ່ວງ ເດືອນ ກໍລະກົດ (7) ຫາເດືອນ ສິງຫາ (8) ແຕ່ບາງປີກໍ່ເລີ້ມລະຫວ່າງເດືອນສິ່ງ ຫາ ຫາເດືອນ ກັນຍາ(9)ໄລຍະນ້ຳຖ້ວມຊັ້ງແມ່ນຢູ່ໃນໄລຍະ 7-15 ວັນ

## 3.1.2/ ປະລິມານຄວາມຮຸນແຮງແລະ ເນື້ອທີ່ຖືກຖ້ວມ

- ປະລິມານຄວາມຮຸນແຮງຂອງໄພນ້ຳຖ້ວມ ແມ່ນຂື້ນຢູ່ກັບຜົນກະທົບ ຕໍ່ສິ່ງຕ່າງໆ ໃນເຂດທີ່ຖືກ ນ້ຳຖວ້ມ ເຊິ່ງລວມເອົາທັງສັບສິນ ຂອງປະຊາຊົນ (ເຮືອນຊານ ບ້ານຊ່ອງ, ໄຮ່ນາຮົ້ວສວນ , ສັດລ້ຽງ ເຊິ່ງຜົນກະທົບດັ່ງກ່າວໃນຮອບ10 ປີ (1996-2005) ພໍສັງລວມໄດ້ ແຕ່ລະດ້ານດັ່ງຕາຕະລາງ ແລະ ຮູບສະແດງຕໍ່ໄປນີ້.

ກ/ ຜົນກະທົບທາງດ້ານ ສັງຄົມ ແລະ ການປົກຄອງ

| ລ/ດ | ເນືອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ |
|---|---|---|---|---|---|---|---|---|---|---|---|
| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
| 1 | ຈ/ນ ບ ທີ່ຖືກກະທົບ | - | 43 | 34 | 39 | - | 42 | 48 | - | 35 | 34 |
| 2 | ຈ/ນຫຼັງຄາທີ່ຖືກກະທົບ | | 125 | 636 | 850 | | 258 | 262 | | 416 | |
| 3 | ຈ/ນຄອບຄົວທີ່ຖືກກະທົບ | - | 123 | 632 | 859 | - | 257 | 259 | - | 413 | 384 |
| 4 | ຈ/ນປະຊາກອນທີ່ຖືກກະທົບ | | 6190 | 3160 | 4507 | - | 14040 | 14159 | - | 2159 | 1922 |

### ຂ/ ຜົນກະທົບທາງດ້ານກະສິກຳ

ຜົນກະທົບຕໍ່ການຜະລິດເຂົ້ານາປີ

| ລ/ດ | ເນືອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ |
|---|---|---|---|---|---|---|---|---|---|---|---|
| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
| 1 | ເນື້ອທີ່ນາລວມ(ຮຕ) | | 6430 | 6260 | 6721 | - | 6048 | 6520 | - | 6570 | 6450 |
| 2 | ເນື້ອທີ່ຖືກນ້ຳຖ້ວມ | | 3452 | 2324 | 2258 | - | 1984 | 4683 | - | 1234 | 1425 |
| 3 | ເນື້ອທີ່ນາເສຍຫາຍຈາກ ນ້ຳຖ້ວມ | | 2476 | 1263 | 1850 | - | 1310 | 3568 | - | 950 | 769 |
| 4 | ຜົນເສຍຫາຍ | | 8,089 | 7,121 | 7,624 | | 7,532 | 13,255 | | 3,123 | 2,69 |
| 5 | ມູນຄ່າເສຍຫາຍ (xລ່ານກີບ) | | 18,462 | 17,566 | 16,231 | | 12,362 | 27,126 | | 2,234 | 1,12 |

### ຄ/ ຜົນກະທົບດ້ານຊົນລະປະທານ

| ລ/ດ | ເນືອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ລວມ |
|---|---|---|---|---|---|---|---|---|---|---|---|---|
| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 | |
| 1 | ມູນຄ່າເສຍຫາຍ (xລ້ານກີບ) | | 74,754 | 29,24 | 32,41 | | 312.41 | 85,521 | | 25,13 | | 270,315 |

### ງ/ ຜົນກະທົບດ້ານສັດລ້ຽງ

| ລ/ດ | ເນື້ອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ |
|---|---|---|---|---|---|---|---|---|---|---|---|

| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|---|---|
| 1 | ມູນຄ່າເສຍຫາຍ (xລ້ານກີບ) | 0 | 578,16 | 463,35 | 424,14 | 0 | 432,22 | 689,07 | 0 | 407,61 | 345 |

ຈ/ ຜົນກະທົບທາງດ້ານ ພື້ນຖານໂຄງລ້າງ ຄົມມະນາຄົມ(ມູນຄ່າເສຍຫາຍຂອງຫົນທາງ,ຂົວ ແລະທີ່ຕ່າງໆ ຫົວໜ່ວຍxລ້ານກີບ)

| ລ/ດ | ເນືອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ລວມ |
|---|---|---|---|---|---|---|---|---|---|---|---|---|
| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 | |
| 1 | ຫົນທາງແຂວງ (N0:12 | | 115 | 113 | 118 | | 186 | 210 | | | | |
| 2 | ຫົນທາງເມືອງ | | 32 | 31 | 28 | | 45 | 63 | | 41 | 81 | |
| 3 | ເສັ້ນທາງເທດສະບານ | | 120 | 118 | 110 | | 92 | 194 | | 100 | 35 | |
| 4 | ທາງດິນແດງ | | 240 | 220 | 216 | | 154 | 215 | | 136 | 870 | |
| 5 | ທາງຊຸມຊົນ | | 52 | 50 | 49 | | 64 | 86 | | 52 | 46 | |
| | ລວມ | | 559 | 532 | 521 | | 541 | 768 | | 329 | 1.032 | |

**ສ/ <u>ຜົນກະທົບທາງດ້ານວັດທະນະທຳ</u>**

- ລວມ ມູນຄ່າເສຍຫາຍ ທາງດ້ານວັດທະນະທຳ -ສັງຄົມ ແຕ່ປີ 199-2008( ຫົວໜ່ວຍxລ້ານກີບ)

| ລ/ດ | ເນື້ອໃນລາຍການ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ | ປີ |
|---|---|---|---|---|---|---|---|---|---|---|---|
| | | 1999 | 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
| 1 | ດ້ານການສຶກສາ | | 38,80 | 13,50 | 10,70 | | 181,25 | 22,25 | | 48,50 | 16,50 |
| 2 | ດ້ານສາທາລະນະສຸກ | | 571,34 | 551,07 | 48,067 | | 20,45 | 2,009 | | 11,66 | 13,27 |
| ລວມ | | | | | | | | | | | |

3.1.3/ ສັງລວມມູນຄ່າເສຍຫາຍ ຈາກຜົນກະທົບໃນແຕ່ລະຂົງເຂດ

- ໃນໄລຍະ 10 ປີຜ່ານມາ (1999-2008) ຜົນເສຍຫາຍຈາກໄພນ້ຳຖ້ວມ

+ ມູນຄ່າລວມທັງໝົດ <u>269.008.597.780 ກີບ</u>
  - ➢ ໃນນັ້ນລວມດ້ານຕ່າງໆຄື
  - \+ ດ້ານກະສິກຳ <u>286.187.780 ກີບ</u>
  - \- ການປູກເຂົ້າ(ນາປີ) 176.580.000.000 ກີບ
  - \- ຊົນລະປະທານ 7.860.000.000 ກີບ
  - \- ສັດລ້ຽງ 4.987.800.000 ກີບ
  - \+ ພື້ນຖານໂຄງລ່າງຄົມມະນາຄົມ 65.599.000.000 <u>ກີບ</u>
  - \+ ດ້ານວັດທະນະທຳ-ສັງຄົມ 6.823.890.000 <u>ກີບ</u>
  - \- ດ້ານການສຶກສາ 168.500.000 ກີບ
  - \- ດ້ານສາທາລະນະສຸກ 6.032.240.000 ກີບ

## 3.2/ ໄຟອັນຕະລາຍຈາກໄຟແຫ່ງແລ້ງ

- ສາຍເຫດທີ່ພາໃຫ້ມີອັນຕະລາຍ ແລະ ລະດູການ ໄລຍະແຫ່ງແລ້ງ

ນອກຈາກໄພພິບັດນ້ຳຖ້ວມແລ້ວເມືອງຂອງພວກເຮົາຍັງມີໄຟແຫ່ງແລ້ງຕິດຕາມມາເຊິ່ງໄຟແຫ່ງ ແລ້ງ ກໍ່ເປັນສິ່ງໜຶ່ງທີ່ຂຶ້ນຊູ້ຊີວິດ ແລະແບບແຜນການທຳມາຫາກິນ ຂອງປະຊາຊົນພາຍໃນເມືອງ ສາຍເຫດຕົ້ນຕໍ່ກໍ່ເກີດ ຈາກທຳມະຊາດແຕ່ຈຸດທີ່ມີຄວາມສ່ຽງທີ່ທໍ່ແຫມບາງ ບ່ອນກໍ່ແກ້ໄຂໄດ້ ສ່ວນໜຶ່ງ ກໍ່ຍ້ອນມີລະບົບຊົນລະປະທານໄດ້ເຮັດນາແຊງ.

## 3.3/ ຂົງເຂດສັງຄົມ ແລະການປົກຄອງ

3.3.1 ບັນດາບ້ານທີ່ມີຄວາມສ່ຽງຕໍ່ການເກີດໄພພິບັດ

### ກ.) <u>ບ້ານທີ່ມີຄວາມສ່ຽງປະເພດ I</u>

| ລ/ດ | ຊື່ບ້ານ | ຈຳນວນຫຼັງຄາ | ຈຳນວນພົນລະເມືອງ | |
|---|---|---|---|---|
| | | | ລວມ | ຍິງ |
| 1 | ບ້ານ ສົມສະນຸກ | 51 | 295 | 130 |
| 2 | ບ້ານ ດ້າງ | 157 | 895 | 415 |
| 3 | ບ້ານ ນາກຽວ | 87 | 558 | 290 |
| 4 | ບ້ານ ແກ້ງສະຫວາງ | 28 | 162 | 85 |
| 5 | ບ້ານຄຳເຟືອງ | 92 | 480 | 253 |
| 6 | ບ້ານປົ່ງ | 37 | 211 | 111 |
| 7 | ບ້ານ ຜານາງ | 51 | 230 | 120 |
| 8 | ບ້ານ ມະຫາໄຊ | 225 | 1.134 | 570 |
| 9 | ບ້ານໂພວາ | 184 | 934 | 477 |
| 10 | ບ້ານ ກາງຍາງຄຳ | 28 | 165 | 84 |
| 11 | ບ້ານ ນາທານ | 56 | 314 | 172 |
| 12 | ບ້ານ ອີ່ລານ | 54 | 288 | 147 |
| 13 | ບ້ານໜອງກອກ | 21 | 115 | 70 |
| 14 | ບ້ານເວີນ | 25 | 145 | 78 |
| 15 | ບ້ານນາຄ້າຍ | 55 | 328 | 170 |
| 16 | ບ້ານ ນາຮີ | 56 | 310 | 159 |
| | ລວມ | | | |

### ຂ.) <u>ບ້ານທີ່ມີຄວາມສ່ຽງປະເພດ II</u>

ຈຳນວນບ້ານທີ່ຈັດໃນປະເພດ 2 ແມ່ນມີຄວາມສ່ຽງບໍ່ຮ້າຍແຮງ ຍ້ອນຖ້ວມໄລຍະສັ້ນ

| ລ/ດ | ຊື່ບ້ານ | ຈຳນວນຫຼັງຄາ | ຈຳນວນຄອບຄົວ | ຈຳນວນພົນລະເມືອງ | |
|---|---|---|---|---|---|
| | | | | ລວມ | ຍິງ |
| 1 | ບ້ານນາກອກ | 28 | | 162 | 62 |

| | | | | | |
|---|---|---|---|---|---|
| 2 | ບ້ານ ກວນຕັ້ນ | 52 | | 288 | 162 |
| 3 | ບ້ານ ສ້າງຟອກ | 90 | | 470 | 246 |
| 4 | ບ ໂພນໃຊ | 46 | | 251 | 124 |
| 5 | ບ ໄຮ່ໃຕ້ | 19 | | 81 | 43 |
| 6 | ບ ນາໝາກບ້າ | 75 | | 390 | 210 |
| 7 | ບ ດອນດິງ | 44 | | 212 | 110 |
| 8 | ບ ດອນທິ່ງ | 52 | | 232 | 122 |
| 9 | ບ ນາມະລາດ | 43 | | 229 | 188 |
| 10 | ບ ໂນນ ແດງ | 97 | | 493 | 249 |
| 11 | ບ ໂພນເຫຼັກ | 109 | | 627 | 320 |
| 12 | ບ ປາກຊ່ອງ | 107 | | 598 | 303 |
| 13 | ບ ນາແສ | 132 | | 796 | 418 |
| 14 | ບ ນາຈານ | 74 | | 399 | 200 |
| 15 | ບ ຜາແຄນ | 56 | | 293 | 150 |
| 16 | ບ ກະວະ | 62 | | 320 | 164 |
| 17 | ບ ກວນຫຼວງ | 50 | | 242 | 123 |
| 18 | ບ ຜາກິ່ວ | 52 | | 272 | 149 |
| 19 | ບ ບ້ານຊອງ | 97 | | 611 | 308 |
| 20 | ບ ຫຼັກ 7 | 153 | | 859 | 429 |
| 21 | ບ ຜາຈຸມຄອງ | 56 | | 305 | 150 |
| 22 | ບ ໂພນຄຳ | 51 | | 300 | 147 |
| ລວມ 22 ບ້ານ | | 1.545 | | 8.430 | 4.377 |

### 3.3.2/ <u>ຂົງເຂດກະສິກຳ</u>:

ເນື້ອທີ່ນາຈຳນວນ 4.683 ຮຕ ແລະເນື້ອທີ່ສວນ 100 ຮຕ, ຖືກນ້ຳຖ້ວມ ແລະມີຜົນສາຍເປັນຈຳນວນຫຼາຍເໝືອນດັ່ງປີ 2005 ເນື້ອ ທີ່ນາເສຍຫາຍເຖິງ 3.568 ຮຕ ,

- ສັດລ້ຽງຖືກຜົນກະທົບໂດຍແມ່ນ ງົວ,ຄວາຍ ,ໝູ່ ແລະ ສັດປີກ ມີຈຳນວນທັງໝົດ 20.513 ໂຕ
- ໜອງຂອງປະຊາຊົນຈຳນວນ 37 ໜອງ ຖືກນ້ຳຖ້ວມ ສ້າງຄວາມເສຍຫາຍ ອັນໜັກໜວງໃຫ້ແກ່ປະຊາຊົນ

### 3.3.3/ <u>ຂົງເຂດພື້ນຖານ ໂຄງລາງ ຄົມມະນາຄົມ</u> :

- ຖະໜົນຫົນທາງຈຳນວນ8 ເສັ້ນ ຖືກເຈາະເຈື່ອນເປພັງສາຍຫາຍ , ຂົວ1 ແຫ່ງ, ທໍ່ລອດທາງ 2 ແຫ່ງ ,

**3.3.4/ <u>ຂົງເຂດວັດທະນະທຳ-ສັງຄົມ</u>** :ໂຮງຮຽນ, ໂຮງໝໍ ວັດວາອາລາມ ກໍ່ຖືກຜົນກະທົບແລະເສຍຫາຍເປັນຈຳນວນ 16 ແຫ່ງ,

## 3.4. <u>ຄວາມສາມາດ ແລະ ແຫ່ງວັດຖຸ</u>

### 3.4.1/ ບັນຊີ ວັດຖຸອຸປະກອນ ຮັບໃຊ້ ສຳລັບຮອງຮັບ ການຍົກຍ້ານຄົວເຮືອນ .

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຕັ້ນ 15x5 | ຊຸດ | 75 | | 75 | |
| 2 | ເຄື່ອງຄົວ (ຖ້ວຍຊາມ) 15x5 | ຊຸດ | 75 | | 75 | |
| 3 | ຈັກໄຟຟ້າ ແລະ ນ້ຳມັນ15x1 | ຊຸດ | 15 | | 15 | |
| 4 | ສະບຽງອາຫານ15x10 | ຊຸດ | 150 | | 150 | |

### 3.4.2/ ບັນຊີພາຫະນະຂົນສົ່ງ

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຮືອໄມ້ ແລະເຄື່ອງຈັກ | ລຳ | 1.350 | 836 | 514 | |
| 2 | ເຮືອທ້ອງແບນ ແລະ ເຄື່ອງຈັກ | ລຳ | 10 | 0 | 10 | |
| 3 | ລົດບັນທຸກ | ຄັນ | 114 | 48 | 66 | ເອກະຊົນ |
| 4 | ລົດໂດຍສານ | ຄັນ | 56 | 35 | 21 | ເອກະຊົນ |
| 5 | ລົດໄຖນາ | ຄັນ | 2.136 | 2.136 | 0 | ລົດປະຊາຊົນ |
| 6 | ລົດກະບະ | ຄັນ | 15 | 10 | 5 | ລົດເມືອງ |
| 7 | ເຄື່ອງອຸປະກອນຊູຊີບ | ຊຸດ | 130 | 0 | 130 | ເສື້ອເຊືອກ |

### 3.4.3/ ບັນຊີອຸປະກອນຊື່ສານ

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ຄອມພິວເຕີ | ເຄື່ອງ | 1 | 00 | 1 | |
| 2 | ໂທລະສັບຜ່ານດາວທຽມ | ເຄື່ອງ | 23 | 0 | 23 | |
| 3 | ວິທະຍຸຕິດ ຕໍ່ທາງໄກ | ເຄື່ອງ | 20 | 0 | 20 | |
| 4 | ໂທລະໂຄ່ງ | ເຄື່ອງ | 15 | 0 | 15 | ແບບເຄື່ອນທີ່ |
| 5 | ລະບົບເຕືອນໄພ | ເຄື່ອງ | 17 | 0 | 17 | |

### 3.4.4/ ບັນຊີອຸປະກອນຄອບຄຸມນ້ຳຖ້ວມ

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຄື່ອງໝາຍວັດແທະ ນ້ຳຖ້ວມ | ຈຸດ | 1 | 00 | 1 | |
| 2 | ຖົງຂີ້ຊາຍ | ຖົງ | 23.000 | 0 | 23.000 | |
| 3 | ຈັກສູບນ້ຳ | ເຄື່ອງ | 15 | 0 | 15 | |
| 4 | ຄອງລະບາຍນ້ຳ | ຈຸດ | 15 | 0 | 15 | |

### 4.4 .5/ ບັນຊີ ສິ່ງອຳນວຍຄວາມສະດວກ ທາງການແພດ

| ລ/ດ | ລາຍການວັດແທກ ອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ໂຮງໝໍ ສຸກສາລາ | ແຫ່ງ | 1 | 1 | 0 | |
| 2 | ທ່ານ ໝໍຊ່ຽງຊານ | ຄົນ | 1 | 0 | 1 | |
| 3 | ລົດໂຮງໝໍ | ຄັນ | 2 | 1 | 1 | |
| 4 | ອຸປະກອນການແພດ | Xລ້ານ | 10.000.000 | 5.000.000 | 5.000.000 | |
| 5 | ຢາ ປົວພະຍາດ | xລ້ານກີບ | 40.000.000 | 20.000.000 | 20.000.000 | |

### 4.5.6/ ບັນຊີ ຊັບພະຍາກອນ ມະນຸດ

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
